ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 1244 -----/ຫອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ 12 MAY 2015

ເຖິງ: ທ່ານ ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງໄຊສົມບູນ.

ເລື່ອງ: ການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 552/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ດຳລັດວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22/4/2010;
- ອີງຕາມ ໃບສະເໜີຂໍສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຢູ່ແຂວງໄຊສົມບູນ ສະບັບເລກທີ 351/ອຄ.ຊບ, ລົງວັນທີ 18 ມີນາ 2015.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ກໍ່ຄືລັດຖະບານແຫ່ງ ສປປ ລາວ ໄດ້ຕົກລົງມອບໂອນສິດໃຫ້ແກ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງໄຊສົມບູນ ເປັນຜູ້ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຈຳນວນ 06 ຊະນິດຟອມ ເຊັ່ນ: ຟອມ A, D, S, AI, DFTP ແລະ APTA.

ການຈັດຕັ້ງປະຕິບັດອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໃຫ້ປະຕິບັດຕາມຂໍ້ຕົກລົງ ວ່າດ້ວຍ ການມອບສິດໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ໃນທົ່ວປະເທດ ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ສິດທິພິເສດ ສະບັບເລກທີ 2036/ອຄ.ກຂອ, ລົງວັນທີ 12/10/2010; ແຈ້ງການປັບປຸງການຈັດຕັ້ງປະຕິບັດ ສະບັບເລກທີ 1923/ອຄ.ກຂອ, ລົງວັນທີ 11/9/2012 ແລະ ຄຳແນະນຳ ກ່ຽວກັບ ການຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ສະບັບເລກທີ 2225/ອຄ.ກຂອ, ລົງວັນທີ 05/12/2015 ຢ່າງເຄັ່ງຄັດ.

ການຈັດຕັ້ງປະຕິບັດ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດັ່ງກ່າວຂ້າງເທິງ ຈະໄດ້ປະຕິບັດເລີ່ມແຕ່ວັນທີ 01/10/2015 ເປັນຕົ້ນໄປ, ເນື່ອງຈາກພະແນກອຸດສາຫະກຳ ແລະ ການຄ້າແຂວງໄຊສົມບູນ ຕ້ອງໄດ້ແຈ້ງແບບຢ່າງລາຍເຊັນຜູ້ມີສິດເຊັນໃບຢັ້ງຢືນດັ່ງກ່າວຢ່າງໜ້ອຍ 03 ທ່ານ ພ້ອມດ້ວຍແບບຢ່າງກາປະທັບຂອງພະແນກ ມາຍັງ ກົມການນຳເຂົ້າ ແລະ ສົ່ງອອກ ເພື່ອຈະໄດ້ແຈ້ງຕໍ່ໄປຍັງບັນດາປະເທດທີ່ກ່ຽວຂ້ອງຊາບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າຫ້ອງການ,

ສົມຫວັງ ນິນທະວົງ

ເອກະສານຄັດຕິດ:
- ຂໍ້ຕົກລົງ ສະບັບເລກທີ 2036/ອຄ.ກຂອ, ລົງວັນທີ 12/10/2010;
- ແຈ້ງການ ສະບັບເລກທີ 1923/ອຄ.ກຂອ, ລົງວັນທີ 11/9/2012;
- ຄຳແນະນຳ ສະບັບເລກທີ 2225/ອຄ.ກຂອ, ລົງວັນທີ 05/12/2015.
- ແບບຢ່າງລາຍເຊັນ ແລະ ກາປະທັບ ແລະ ກາສີນ.

ບ່ອນສົ່ງ:
- ຫ້ອງວ່າການແຂວງໄຊສົມບູນ 1 ສະບັບ
- ກົມຈັດຕັ້ງ ແລະ ພະນັກງານ 1 ສະບັບ